ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງ ກະສິກຳ ແລະ ປ່າໄມ້

ກົມປ່າໄມ້ ເລກທີ: 2156/ປມ.2005

ນະຄອນຫຼວງວຽງຈັນ, ວັນທີ 06.11.2006

# ບົດແນະນຳ ຂອງ ກົມປ່າໄມ້

## ວ່າດ້ວຍ

## ການວາງແຜນ ຈັດສັນປ່າຜະລິດແບບຍືນນານ

- ອີງຕາມ ກົດໝາຍປ່າໄມ້ ສະບັບເລກທີ 01 - 96 ລົງວັນທີ 11/10/1996.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບ ເລກທີ 59/ນຍ, ລົງວັນທີ 22/05/2002 ວ່າດ້ວຍ ການຄຸ້ມຄອງ ປ່າຜະລິດ ແບບຍືນນານ.
- ອີງຕາມ ລະບຽບການ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 0204/ກປ.03, ລົງວັນທີ 03/10/2003 ວ່າດ້ວຍ ການສ້າງຕັ້ງ ແລະ ຄຸ້ມຄອງ ປ່າຜະລິດ ແບບຍືນນານ.
- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ 0108/ກປ.05, ລົງວັນທີ 20/4/2005 ວ່າດ້ວຍ ລະບຽບການສຳຫຼວດປ່າໄມ້.

### I. ຈຸດປະສົງ

1. ແນ່ໃສ່ ຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້ ແບບຍືນນານ, ມີປະສິດທິຜົນ ໄປຄຽງຄູ່ກັບ ການປົກປັກຮັກສາ ສະພາບແວດລ້ອມ ປະກອບສ່ວນເຂົ້າໃນການ ປັບປຸງຊີວິດການເປັນຢູ່ ຂອງ ປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນ.
2. ກຳນົດ ຫຼັກການ ແລະ ວິທີການໃນ ການວາງແຜນຈັດສັນປ່າຜະລິດ ແບບຍືນນານ ໃຫ້ມີຄວາມເປັນ ເອກະພາບ ໃນຂອບເຂດທົ່ວປະເທດ.

II. ນິຍາມ

1. <u>ປ່າຜະລິດ</u>: ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້, ຊຶ່ງຖືກຈັດແບ່ງ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ຊີວິດການເປັນຢູ່ ຂອງປະຊາ ຊົນບັນດາເຜົ່າ ດ້ານໄມ້ ແລະ ຜະລິດຕະພັນປ່າໄມ້ ຢ່າງເປັນປົກກະຕິ ຕະຫຼອດໄປ ຊຶ່ງບໍ່ມີຜົນກະ ທົບຢ່າງຮ້າຍແຮງ ຕໍ່ສິ່ງແວດລ້ອມ.
2. <u>ເຂດປ່າຜະລິດ</u>: ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຄຸນລັກສະນະຄົບຖ້ວນ ຕາມນິຍາມ ປ່າຜະລິດ, ສ້າງຕັ້ງຂຶ້ນ ໂດຍຖືກຕ້ອງ ຕາມລະບຽບຫຼັກການ, ເປັນພື້ນທີ່ປ່າໄມ້ ທີ່ລວມມີຫຼາຍ ປະເພດປ່າ ແລະ ໄດ້ຮັບ ການຈັດແບ່ງເຂດ ຂອງແຕ່ລະປະເພດປ່າ ຕາມກຳນົດໝາຍ ທາງດ້ານ ວິຊາການເພື່ອຈັດສັນ ພາຍໃຕ້ ລະບົບການຄຸ້ມຄອງ ແບບຍືນນານ ໂດຍມີການເຂົ້າຮ່ວມ ຂອງ ປະຊາຊົນ.
3. <u>ເຂດຄຸ້ມຄອງ</u>: ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ຢູ່ໃນເຂດປ່າຜະລິດ, ຊຶ່ງຖືກຈັດແບ່ງ ແລະ ຄຸ້ມຄອງ ຕາມເຂດແດນປົກຄອງເມືອງ.
4. <u>ເຂດຄຸ້ມຄອງຍ່ອຍ</u>: ແມ່ນພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ຢູ່ພາຍໃນເຂດຄຸ້ມຄອງ, ຊຶ່ງຖືກຈັດແບ່ງເພື່ອສະດວກ ໃນການຄຸ້ມຄອງ ແລະ ນຳໃຊ້ ແບບຍືນນານ.
5. <u>ໜ່ວຍຄຸ້ມຄອງ ປ່າຜະລິດ</u>: ເປັນໜ່ວຍຄຸ້ມຄອງໜຶ່ງ ທີ່ຂຶ້ນກັບໜ່ວຍງານປ່າໄມ້ເມືອງ (ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ) ມີໜ້າທີ່ ໃນການຄຸ້ມຄອງ ປ່າຜະລິດ ແບບຍືນນານ ພາຍໃນ ເມືອງຂອງຕົນ.
6. <u>ການຈັດຕັ້ງປ່າໄມ້ບ້ານ</u>: ແມ່ນການຈັດຕັ້ງໜຶ່ງ ຂອງປະຊາຊົນ ທີ່ໄດ້ສ້າງຕັ້ງຂຶ້ນ ຢູ່ໃນບ້ານ ເພື່ອປະກອບສ່ວນ ເຂົ້າໃນການຄຸ້ມຄອງປ່າໄມ້ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງບ້ານ ໂດຍມີນາຍບ້ານເປັນຫົວໜ້າ.
7. <u>ການຈັດຕັ້ງກຸ່ມປ່າໄມ້ບ້ານ</u>: ແມ່ນການຈັດຕັ້ງໜຶ່ງ ຊຶ່ງປະກອບດ້ວຍຕົວແທນ ຈາກຫຼາຍບ້ານ ທີ່ມີທີ່ຕັ້ງຕິດຈອດກັນ, ມີການພົວພັນໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຮ່ວມກັນ.
8. <u>ພື້ນທີ່ປ່າຜະລິດຕົວຈິງ</u>: ໝາຍເຖິງພື້ນທີ່ປ່າທີ່ສາມາດສະໜອງໄມ້ໄດ້ ຫຼື ສາມາດດຳເນີນການຂຸດຄົ້ນພາຍໃນອາຍຸການຂອງແຜນຈັດສັນ.
9. <u>ພື້ນທີ່ປ່າອະນຸລັກ</u>: ໝາຍເຖິງພື້ນທີ່ປ່າທີ່ຈະຕ້ອງປົກປັກຮັກສາ ເພື່ອຈຸດປະສົງທາງດ້ານການອະນຸລັກເຊັ່ນ ປ່າທີ່ມີຄວາມສຳຄັນສູງ ທາງດ້ານ ຊີວະນາງພັນ, ປະຫວັດສາດ ແລະ ຮີດຄອງປະເພນີ.
10. ພື້ນທີ່ປ່າປ້ອງກັນ: ໝາຍເຖິງພື້ນປ່າທີ່ມີຄວາມຄ້ອຍຊັນສູງ, ເຂດລຽບສາຍນ້ຳ ແລະ ພື້ນທີ່ຊຶ່ງ ມີການເຊາະເຈື່ອນໄດ້ງ່າຍ.
11. ພື້ນທີ່ປ່າຟື້ນຟູ: ແມ່ນພື້ນທີ່ປ່າ ທີ່ຢູ່ໃນສະພາບ ທີ່ເປັນປ່າເລົ່າອ່ອນ ທີ່ໄດ້ຈັດແບ່ງໄວ້ເພື່ອຟື້ນຟູ, ບູລະນະ ໃຫ້ກາຍເປັນ ປ່າທຳມະຊາດ ທີ່ອຸດົມສົມບູນຄືນໄດ້.
12. ພື້ນທີ່ປ່າຊຸດໂຊມ: ແມ່ນພື້ນທີ່ປ່າ ທີ່ຖືກທຳລາຍຢ່າງໜັກໜ່ວງເຊັ່ນ: ເນື້ອທີ່ດິນບໍ່ມີປ່າ ຫຼື ເນື້ອທີ່ດິນປອກໂລ້ນ ຊຶ່ງຈັດແບ່ງໄວ້ ເພື່ອປູກຕົ້ນໄມ້ຄືນໃໝ່ ຫຼື ມອບໃຫ້ບຸກຄົນ ແລະ ການຈັດຕັ້ງນຳໃຊ້ເຂົ້າໃນການປູກຕົ້ນໄມ້, ການຜະລິດ ກະສິກຳ-ປ່າໄມ້-ລ້ຽງສັດ ແບບຖາວອນ ຫຼື ນຳໃຊ້ ເຂົ້າໃນເປົ້າໝາຍອື່ນ ຕາມແຜນພັດທະນາເສດຖະກິດແຫ່ງຊາດ.

13. ພື້ນທີ່ປ່າປູກ: ໝາຍເຖິງພື້ນທີ່ປ່າ ທີ່ບໍ່ໄດ້ເກີດຂື້ນຕາມທຳມະຊາດ, ແຕ່ເກີດຂື້ນ ຈາກ ການບຸກເບີກ ໂດຍ ການນຳເອົາເບ້ຍມາປູກ.

14. ພື້ນທີ່ປ່າຊົມໃຊ້ຂອງບ້ານ: ໝາຍເຖິງພື້ນທີ່ປ່າ ຊຶ່ງໄດ້ຈັດແບ່ງ ເພື່ອການຊົມໃຊ້ ຂອງບ້ານ ຕາມການ ຈັດສັນ ຈາກການມອບດິນ-ມອບປ່າ.

III. ໂຄງຮ່າງຂອງແຜນຈັດສັນປ່າຜະລິດ

ແຜນຈັດສັນປ່າຜະລິດ ປະກອບມີ:

1. ບົດນຳ

ບົດນີ້ ຄວນຈະສັງລວມໄວ້ ໃນປະມານໜຶ່ງໜ້າ ຊຶ່ງມີເນື້ອໃນສຳຄັນ ດັ່ງນີ້: ແນວທາງນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍຂອງລັດ ຕໍ່ກັບ ວຽກງານປ່າໄມ້, ຄວາມໝາຍຄວາມສຳຄັນ ຂອງ ການ ຄຸ້ມຄອງປ່າໄມ້ແບບຍືນນານ, ຂະບວນການມີສ່ວນຮ່ວມ ໃນການສ້າງແຜນ, ທິດຊີ້ນຳ ໃນ ການຈັດຕັ້ງປະຕິບັດ ແຜນຈັດສັນ ແລະ ຕ້ອງໄດ້ຮັບອະນຸມັດຈາກ ກົມປ່າໄມ້.

2. ບົດສັງລວມຫຍໍ້

ພາກນີ້ ຕ້ອງສັງລວມເນື້ອໃນຂອງແຜນຈັດສັນໂດຍຫຍໍ້ໆ ຊຶ່ງລວມມີ: ຈຸດປະສົງ ແລະ ເປົ້າໝາຍ ຂອງການວາງແຜນຈັດສັນປ່າໄມ້, ວິທີການສ້າງແຜນຈັດສັນ, ຜົນໄດ້ຮັບ, ຂໍ້ມູນພື້ນທີ່ ແລະ ແຜນດຳ ເນີນງານ.

3. ເປົ້າໝາຍ ແລະ ຈຸດປະສົງ

**3.1 ເປົ້າໝາຍ ຂອງ ການຈັດສັນປ່າໄມ້**

ເປົ້າໝາຍ ຂອງການວາງແຜນຈັດສັນປ່າຜະລິດ ຕ້ອງເລັ່ງໃສ່ 3 ບັນຫາໃຫຍ່ ຄື: ປະກອບສ່ວນ ເຂົ້າ ໃນການພັດທະນາທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

**3.2 ຈຸດປະສົງ ຂອງ ການວາງແຜນຈັດສັນປ່າໄມ້**

ຈຸດປະສົງ ຂອງການວາງແຜນຈັດສັນປ່າຜະລິດ ຕ້ອງເລັ່ງໃສ່ ເຮັດໃຫ້ ປ່າໄມ້ ສາມາດສະໜອງ ໄມ້ ແລະ ຜະລິດຕະພົນປ່າໄມ້ ແບບສະໝໍ່າສະເໝີ ແລະ ຍືນນານ.

4. ສະພາບ ພື້ນທີ່ພູມີປະເທດ, ຊັບພະຍາກອນປ່າໄມ້, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

**4.1 ສະພາບພື້ນທີ່ພູມີປະເທດ**

ອະທິບາຍ ໂດຍນຳໃຊ້ ຕາຕະລາງ ແລະ ຮູບສະແດງ ທີ່ເໝາະສົມ ເພື່ອນຳສະເໜີ ໂດຍຫຍໍ້ ຂໍ້ ມູນ ຄວາມໜາແໜ້ນຂອງບ້ານ, ເນື້ອທີ່, ທີ່ຕັ້ງ, ການຄົມມະນາຄົມ, ສະພາບພູມີປະເທດ, ດິນ, ພູມອາກາດ, ປະລິມານນ້ຳຝົນ, ຫ້ວຍນ້ຳລຳເຊ ແລະ ອື່ນໆ.

4.2 ຊັບພະຍາກອນປ່າໄມ້

ອະທິບາຍ ໂດຍຫຍໍ້ ຂໍ້ມູນກ່ຽວກັບ ສະພາບການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນໄລຍະຜ່ານມາ ແລະ ປະຈຸບັນ.

4.3 ເສດຖະກິດ-ສັງຄົມ

ອະທິບາຍ ໂດຍຫຍໍ້ ຂໍ້ມູນກ່ຽວກັບ ພົນລະເມືອງ, ຊົນເຜົ່າ, ເພດ, ໄວ, ການສຶກສາ, ອາຊີບ, ວັດ ທະນະທຳ, ສາທາລະນະສຸກ, ພື້ນທີ່ທຳການຜະລິດ, ຜົນຜະລິດ (ກະສິກຳ, ອຸດສະຫະກຳ, ຫັດ ຖະກຳ ແລະ ບໍລິການ), ລາຍຮັບ, ແຫຼ່ງລາຍຮັບ, ການຕະຫຼາດ ແລະ ອື່ນໆ.

4.4 ສະພາບແວດລ້ອມ

ອະທິບາຍ ໂດຍຫຍໍ້ ກ່ຽວກັບ ປະກົດການທາງດ້ານ ສິ່ງແວດລ້ອມ ທີ່ເກີດຂຶ້ນໃນໄລຍະຜ່ານມາ ໃນ ເຂດປ່າຜະລິດ ແລະ ພື້ນທີ່ໃກ້ຄຽງ ເປັນຕົ້ນແມ່ນ ໄພທຳມະຊາດ ເຊັ່ນ ໄຟປ່າ, ລົມພະຍຸ, ນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ສັດຕູພືດທຳລາຍ.

5. ການກຳນົດຈັດແບ່ງພື້ນທີ່ປ່າ ໃນ ເຂດຈັດສັນ ຕາມຈຸດປະສົງການນຳໃຊ້

ເຂດຈັດສັນ (ເຂດຄຸ້ມຄອງຍ່ອຍ, ເຂດຄຸ້ມຄອງ ຫຼື ເຂດປ່າຜະລິດ) ຈະຕ້ອງໄດ້ຈັດແບ່ງອອກເປັນ ຫຼາຍໆພື້ນທີ່ນຳໃຊ້ ເພື່ອຈຸດປະສົງ ໃນ ການຈັດສັນຄຸ້ມຄອງ ຊຶ່ງອາດປະກອບມີ:

5.1. ເຂດທີ່ສາມາດຜະລິດໄມ້ເປັນສິນຄ້າ

ເຂດນີ້ ປະກອບມີ: ພື້ນທີ່ປ່າຜະລິດຕົວຈິງ, ພື້ນທີ່ປ່າຟື້ນຟູ, ພື້ນທີ່ປ່າຊຸດໂຊມ ແລະ ພື້ນທີ່ ປ່າປູກ.

5.2. ເຂດສະຫງວນ

ເຂດນີ້ປະກອບມີ: ພື້ນທີ່ປ່າອະນຸລັກ ແລະ ພື້ນທີ່ປ່າປ້ອງກັນ.

5.3. ເຂດທີ່ບໍ່ສາມາດຜະລິດໄມ້ເປັນສິນຄ້າ

ເຂດນີ້ປະກອບມີ: ພື້ນທີ່ປ່າຊົມໃຊ້ຂອງບ້ານ, ທີ່ຢູ່ອາໄສ ແລະ ປຸກສ້າງ, ດິນກະສິກຳ, ພະ ລານຫີນ, ໜອງນ້ຳ ແລະ ທາມ.

6. ການວາງແຜນຈັດສັນ ໃນ ແຕ່ລະພື້ນທີ່

6.1. ການວາງແຜນຈັດສັນ ໃນ ເຂດທີ່ສາມາດຜະລິດໄມ້ເປັນສິນຄ້າ

6.1.1 **ພື້ນທີ່ປ່າຜະລິດຕົວຈິງ** (ປ່າຜັດໃບປະສົມ, ປ່າດົງດິບແຫ້ງແລ້ງ, ປ່າໃບເຂັມ, ປ່າໃບເຂັມ ປະສົມໃບກວ້າງ, ປ່າໂຄກ) ຊຶ່ງມີບໍລິມາດໄມ້ຢືນຕົ້ນ ທີ່ມີໜ້າຕັດແຕ່ 20 ຊມ ຂຶ້ນໄປ ຢ່າງໜ້ອຍ 75 $ມ^3$/ຮຕ.

6.1.1.1 ຮອບວຽນຂຸດຄົ້ນ 15 ປີ ສຳລັບ ເຂດທົ່ງພຽງ ແລະ 20 ປີ ສຳລັບ ເຂດເນີນສູງ ແລະ ເນື້ອທີ່ຂຸດຄົ້ນປະຈຳປີ ໄດ້ມາຈາກ ການສະເລ່ຍເນື້ອທີ່ທີ່ສາມາດຂຸດຄົ້ນໄດ້ທັງໝົດ ກັບ ຮອບວຽນຂຸດຄົ້ນ.

6.1.1.2 ການຈັດບູລິມະສິດ ເຂດຂຸດຄົ້ນປະຈຳປີ ຕ້ອງອີງໃສ່ ຄຸ້ມທີ່ມີບໍລິມາດສູງເປັນຫຼັກ ແລະ ຄວນພິຈາລະນາ ເງື່ອນໄຂອື່ນໆ ເຊັ່ນ ການເຂົ້າເຖິງ ແລະ ທາງດ້ານເສດຖະກິດ.

6.1.1.3 ການຂຸດຄົ້ນໄມ້ ໃນ ເຂດປ່າຜະລິດ ຕ້ອງອີງໃສ່ ລະບຽບການຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0221/ກປ.2000, ລົງວັນທີ 13/10/2000 ວ່າດ້ວຍ ການຄຸ້ມຄອງ ການຂຸດຄົ້ນໄມ້ ແລະ ຜະລິດຕະພັນໄມ້.

6.1.1.4 ກຳນົດບໍລິມາດໄມ້ ຂຸດຄົ້ນໃນຮອບວຽນທຳອິດ ຈະຕ້ອງບໍ່ເກີນ 20% ຂອງບໍລິມາດໄມ້ ຢືນຕົ້ນ ແຕ່ໜ້າຕ້າງ 20 ຊມ ຂຶ້ນໄປ ແລະ ບໍລິມາດໄມ້ຢືນຕົ້ນທີ່ຍັງເຫຼືອ ຫຼັງຈາກຂຸດ ຄົ້ນ ບໍ່ໃຫ້ຫຼຸດ 75 ມ$^3$/ຮຕ.

6.1.1.5 ບໍລິມາດອະນຸຍາດຂຸດຄົ້ນປະຈຳປີ ຕ້ອງໄດ້ຄຳນວນ ໂດຍອີງໃສ່ ຂໍ້ມູນສຳຫຼວດປ່າໄມ້ ແລະ ການເຕີບໂຕຂອງປ່າ, ພ້ອມດ້ວຍ ຂໍ້ມູນການເພີ່ມຂຶ້ນຂອງບໍລິມາດໄມ້ (yield information)

6.1.1.6 ວິທີການຄຳນວນຂຸດຄົ້ນປະຈຳປີ ໃຫ້ປະຕິບັດຕາມ ເອກະສານຄັດຕິດ.

6.1.1.7 ການຂຸດຄົ້ນໄມ້ ໃນ ພື້ນທີ່ປ່າ ທີ່ມີບໍລິມາດໄມ້ ຕ່ຳກວ່າ 75 ມ$^3$/ ຮຕ ຈະບໍ່ໄດ້ຮັບອະນຸ ຍາດ ຈົນກວ່າ ປ່າດັ່ງກ່າວ ຈະເຕີບໂຕ ແລະ ມີບໍລິມາດໄມ້ຢືນຕົ້ນ ເຖິງ 85 ມ3 / ຮຕ ສະນັ້ນ ມີບາງ ພື້ນທີ່ປ່າ ອາດບໍ່ສາມາດດຳເນີນການຂຸດຄົ້ນ ໃນໄລຍະຕົ້ນ ຂອງຮອບ ວຽນຕັດຟັນ, ແຕ່ ສາມາດ ວາງແຜນຂຸດຄົ້ນໄດ້ ໃນຕອນທ້າຍ.

6.1.1.8 ຫຼັງຈາກ ມີຂໍ້ມູນການເຕີບໂຕຂອງປ່າ ແລະ ບໍລິມາດໄມ້ ສຳລັບ ເຂດປ່າຜະລິດໃດໜຶ່ງ, ກອງ ສຳຫຼວດ ແລະ ວາງແຜນປ່າໄມ້ ຈະຕ້ອງໄດ້ມີການຄຳນວນ ບໍລິມາດອະນຸຍາດ ຕັດຟັນ ສູງສຸດ ຄືນ ເພື່ອຂໍອະນຸມັດ ຢ່າງເປັນທາງການ ຈາກກົມປ່າໄມ້.

6.1.1.9 ບໍລິມາດໄມ້ແຕ່ລະຊະນິດທີ່ຈະຂຸດຄົ້ນ ຕ້ອງຂຸດຄົ້ນຕາມອັດຕາສ່ວນ ບໍ່ໃຫ້ເກີນ 20% ຂອງບໍລິ ມາດໄມ້ທີ່ມີໜ້າຕ້າງ ແຕ່ 20 ຊມ ຂຶ້ນໄປ ຂອງຊະນິດພັນນັ້ນ.

6.1.1.10 ການຂຸດຄົ້ນຕົວຈິງ ຕ້ອງອີງໃສ່ ບໍລິມາດໄມ້ສາມາດຂຸດຄົ້ນ ທີ່ກຳນົດ ຈາກຂໍ້ມູນການ ສຳຫຼວດ ກ່ອນການຂຸດຄົ້ນ.

6.1.1.11 ຕ້ອງມີການຄາດຄະເນ ສະພາບປ່າ ຫຼັງການຂຸດຄົ້ນ ໂດຍ ການຄຳນວນ ການເຕີບໂຕ ຂອງປ່າ ຫຼັງຈາກແຕ່ລະຮອບວຽນຕັດຟັນ.

6.1.1.12 ປະຊາຊົນທ້ອງຖິ່ນ ສາມາດເກັບກູ້ ເຄື່ອງປ່າຂອງດົງ ຕາມຮູບແບບຍືນນານ ໄດ້ສະເພາະ ແຕ່ພາຍໃນປ່າທີ່ນອນຢູ່ໃນ ຂອບເຂດແດນບ້ານຂອງ ເຂົາເຈົ້າ. ເພື່ອບໍ່ໃຫ້ ການເກັບກູ້ ຫຼື ຂຸດ ຄົ້ນ ເຄື່ອງປ່າຂອງດົງ ບາງຊະນິດ ຫຼາຍເກີນໄປ, ຄວນມີການກຳນົດ ປະເພດ ແລະ ປະລິມານ ທີ່ອະນຸຍາດເກັບກູ້ ໂດຍ ການຕິດຕາມ ແລະ ລວບລວມ ຂໍ້ມູນ ປະເພດ ເຄື່ອງປ່າຂອງດົງ ທີ່ຊາວບ້ານເກັບກູ້.

6.1.1.13 ບ້ານແຕ່ລະບ້ານ ໃນເຂດຄຸ້ມຄອງຍ່ອຍ ຕ້ອງໄດ້ສ້າງ ລະບຽບຫຼັກການຂອງບ້ານ ກ່ຽວກັບ ການເກັບກູ້ ເຄື່ອງປ່າຂອງດົງ ແລະ ຈະກາຍເປັນຂໍ້ມູນພື້ນຖານ ສຳລັບ ແຜນ ການຄຸ້ມຄອງ ເຄື່ອງປ່າຂອງດົງ ຊຶ່ງຈະປະກອບເຂົ້າເປັນສ່ວນໜຶ່ງ ຂອງ ແຜນຈັດສັນ ປ່າໄມ້.

6.1.1.14 ປ່າທີ່ຜ່ານການຂຸດຄົ້ນ ຈະຕ້ອງສາມາດຟື້ນຟູໄດ້ຕາມທຳມະຊາດ, ສະນັ້ນ ການຂຸດ ຄົ້ນຕ້ອງ ໄດ້ ປະຕິບັດຕາມ ຫຼັກການຕ່າງໆ ໃນ ຫົວຂໍ້ທີ 6.1.1 ຂ້າງເທິງ ຢ່າງ ເຄັ່ງຂັດ, ໃຊ້ກົດເກນການ ເລືອກຕົ້ນຕັດ ຢ່າງຖືກຕ້ອງ, ຈົ່ງຕົ້ນໄມ້ແມ່ພັນ ຢ່າງໜ້ອຍ 10 ຕົ້ນ ຕໍ່ ເຮັກຕາ ແລະ ນຳໃຊ້ ວິທີການ ທີ່ສາມາດຫຼຸດ ຜ່ອນຜົນກະທົບ.

6.1.1.15 ສົ່ງເສີມການຟື້ນຟູຂອງປ່າ ໂດຍ ການປູກຊະນິດພັນໄມ້ພື້ນເມືອງ ແລະ ນຳໃຊ້ ເຕັກນິກວິທີການ ບຳລຸງຮັກສາປ່າ ໂດຍສະເພາະແມ່ນ ກັບພື້ນທີ່ປ່າ ທີ່ເຮືອນຍອດ ເປີດກວ້າງ. ການວາງແຜນດຳ ເນີນງານ ການບຳລຸງຮັກສາປ່າ ເພື່ອການຟື້ນຟູ ຈະຕ້ອງໄດ້ ຮ່າງຂື້ນ ຈາກການເກັບຂໍ້ມູນ ລະຫວ່າງ ການສຳຫຼວດປະ ເມີນຜົນ ຫຼັງການຂຸດຄົ້ນ ແລະ ຕ້ອງໄດ້ດຳເນີນ ພາຍໃນ 6 ເດືອນ ຫຼັງຈາກ ການຂຸດຄົ້ນ, ໃນຊ່ວງລະດູ ຝົນປີ ດຽວກັນ.

6.1.2 ການວາງແຜນຈັດສັນ ໃນ ພື້ນທີ່ປ່າຟື້ນຟູ: ປ່າຟື້ນຟູ ແມ່ນ ປ່າ ຊຶ່ງຜ່ານການຂຸດຄົ້ນ ໃນອັດຕາສູງ ຫຼາຍເກີນໄປ ຊຶ່ງເຮັດໃຫ້ ບໍລິມາດໄມ້ຢືນ ຕົ້ນ ຂອງ ປ່າດັ່ງກ່າວ ໄດ້ຫຼຸດລົງ ຕ່ຳກວ່າ 75 $ມ^3$/ຮຕ, ສະນັ້ນ ປ່າຟື້ນຟູ ຄວນ ຈະໄດ້ຮັບ ການຈັດສັນຄຸ້ມ ຄອງ ເພື່ອໃຫ້ເຕີບໂຕ ກາຍເປັນປ່າຜະລິດ ທີ່ສາ ມາດສະ ໜອງໄມ້ໄດ້.

6.1.2.1 ການເກັບກູ້ເຄື່ອງປ່າຂອງດົງ ໃນພື້ນທີ່ປ່າຟື້ນຟູ ໃຫ້ປະຕິບັດ ຕາມລະບຽບ ຫຼັກການຂອງບ້ານ, ແຕ່ ບໍ່ອະນຸຍາດ ໃຫ້ມີການຕັດ/ຂຸດຄົ້ນໄມ້.

6.1.2.2 ປ່າຟື້ນຟູບໍ່ຄວນຈະ ຫັນປ່ຽນ ໃຫ້ເປັນ ພື້ນທີ່ປ່າປູກ ຫຼື ພື້ນທີ່ດິນກະສິກຳ.

6.1.2.3 ການຄຸ້ມຄອງ ປ່າຟື້ນຟູ ໃຫ້ກັບຄືນກາຍເປັນຜະລິດທີ່ສາມາດສະໜອງໄມ້ໄດ້ ຄວນຈະໃຫ້ ເປັນໄປ ຕາມທຳມະຊາດ, ສົ່ງເສີມການຟື້ນຟູຂອງປ່າ ໂດຍ ການປູກຊະນິດພັນໄມ້ພື້ນ ເມືອງ ແລະ ນຳໃຊ້ເຕັກນິກ ວິທີການ ບຳລຸງຮັກສາປ່າ ໂດຍສະເພາະແມ່ນກັບ ພື້ນທີ່ ປ່າທີ່ເຮືອນຍອດ ເປີດກວ້າງ. ການວາງແຜນ ດຳເນີນງານ ການບຳລຸງຮັກສາປ່າ ເພື່ອ ການຟື້ນຟູ ຈະຕ້ອງໄດ້ຮ່າງ ຂື້ນ ຈາກ ຂໍ້ມູນ ສຳຫຼວດຈັດສັນ ຊຶ່ງດຳເນີນການກ່ອນ ການວາງແຜນຈັດສັນ.

6.1.2.4 ປ່າຟື້ນຟູ ຕ້ອງໄດ້ມີການສຳຫຼວດ ກ່ອນການປັບປຸງດັດແກ້ ແຜນຈັດສັນປ່າໄມ້ ເພື່ອສຶກສາ ເບິ່ງວ່າ ປ່າດັ່ງກ່າວ ໄດ້ເຕີບໂຕກັບຄືນກາຍເປັນ ປ່າຜະລິດຕົວຈິງແລ້ວບໍ່?

6.1.3 **ການວາງແຜນຈັດສັນ ໃນ ພື້ນທີ່ປ່າຊຸດໂຊມ:** ປ່າຊຸດໂຊມແມ່ນ ປ່າທີ່ບໍ່ສາມາດເຕີບໂຕຄືນກາຍ ເປັນປ່າຜະລິດທີ່ສາມາດສະໜອງໄມ້ໄດ້ ຕາມທຳມະຊາດ ພາຍໃນຮອບວຽນ ຕັດປ່າ 3 ຮອບ ຫຼື 45 ປີ, ປ່າດັ່ງກ່າວນີ້ ສ່ວນໜຶ່ງ ເກີດຈາກ ການທຳລາຍ ເຊັ່ນ ການຂຸດຄົ້ນໃນໄລຍະຜ່ານມາ ຊຶ່ງເຮັດ ໃຫ້ ບໍລິມາດໄມ້ ຫຼຸດລົງຕ່ຳກວ່າ 30 $ມ^3$/ຮຕ, ຂະນະທີ່ ປ່າຊຸດໂຊມສ່ວນໜຶ່ງ ເກີດໃນພື້ນທີ່ ຊຶ່ງ ດິນມີຄຸນ ນະພາບຕ່ຳ (ເຂດປ່າໂຄກແຫ້ງ) ໂດຍຕົ້ນໄມ້ ບໍ່ສາມາດເຕີບໂຕ ສະນັ້ນ ບໍລິມາດໄມ້ຢືນຕົ້ນ ຈຶ່ງຕ່ຳ.

6.1.3.1 ການເກັບກູ້ເຄື່ອງປ່າຂອງດົງ ໃນ ພື້ນທີ່ປ່າຊຸດໂຊມ ໃຫ້ປະຕິບັດ ຕາມລະບຽບຫຼັກການ ຂອງ ບ້ານ, ແຕ່ບໍ່ຄວນຈະອະນຸຍາດ ໃຫ້ມີ ການຕັດ/ຂຸດຄົ້ນໄມ້.

6.1.3.2 ກ່ອນຈະຫັນປ່ຽນ ປ່າຊຸດໂຊມ ໄປນຳໃຊ້ໃນເປົ້າໝາຍອື່ນ ຕ້ອງໄດ້ຮັບອະນຸມັດ ຈາກ ຂະແໜງ ການທີ່ກ່ຽວຂ້ອງ.

6.1.4 ການວາງແຜນຈັດສັນ ພື້ນທີ່ປ່າປູກ ແລະ ພື້ນທີ່ຈະປູກປ່າ

6.1.4.1 ພື້ນທີ່ປ່າປູກ ແລະ ພື້ນທີ່ຈະປູກປ່າ ທີ່ນອນຢູ່ໃນ ເຂດຄຸ້ມຄອງ ຫຼື ເຂດຄຸ້ມ ຄອງຍ່ອຍ ຊຶ່ງເປັນຂອງສ່ວນບຸກຄົນ ແລະ ການຈັດຕັ້ງ ຄວນລົມທົບກັບ ໜ່ວຍຄຸ້ມປ່າຜະລິດ. *(ລະອຽດເບິ່ງ ລະບຽບ ການສົ່ງເສີມ ການປູກໄມ້ ຍາວນານ)*

6.1.4.2 ປ່າປູກທີ່ນອນຢູ່ໃນເຂດອະນຸລັກ ແລະ ເຂດປ້ອງກັນ ຕ້ອງຮັກສາໄວ້.

## 6.2 ການວາງແຜນຈັດສັນ ໃນເຂດສະຫງວນ

**6.2.1 ການວາງແຜນຈັດສັນ ໃນ ພື້ນທີ່ປ່າອະນຸລັກ ຫຼື ປ່າປ້ອງກັນ:** ພື້ນທີ່ປ່າອະນຸລັກ ປະກອບມີ ເຂດ ກັນ ຊົນ ລຽບສາຍນ້ຳ, ແຫຼ່ງນ້ຳສຳຄັນ, ປ່າທີ່ສຳຄັນ ທາງດ້ານ ສາດສະໜາ ແລະ ປະເພນີ, ພື້ນທີ່ ອະນຸ ລັກ ຊີວະນາງພັນ ແລະ ເຂດອື່ນໆ ທີ່ມີຄຸນຄ່າສູງ ທາງດ້ານການອະນຸລັກ. ພື້ນທີ່ປ່າປ້ອງກັນ ເປັນ ພື້ນທີ່ ທີ່ມີຄວາມຄ້ອຍຊັນສູງ ແລະ ພື້ນທີ່ ທີ່ອັດຕາການເຊາະ ເຈື່ອນງ່າຍ.

6.2.1.1 ການຂຸດຄົ້ນໄມ້ ຈະບໍ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການ ໃນ ປ່າອະນຸລັກ ຫຼື ພື້ນທີ່ປ່າ ປ້ອງກັນ ໃນ ເຂດຄຸ້ມຄອງຍ່ອຍ.

6.2.1.2 ການເກັບກູ້ ເຄື່ອງປ່າຂອງດົງ ຈະໄດ້ຮັບອະນຸຍາດ ສະເພາະ ໃນພື້ນທີ່ ຊຶ່ງບໍ່ໄດ້ຈັດໃຫ້ເປັນ ເຂດຫ້າມ ເກັບກູ້ເດັດຂາດ ອີງຕາມແຜນຈັດສັນປ່າໄມ້. ພື້ນທີ່ທີ່ຈັດໃຫ້ເປັນເຂດ ຫ້າມເດັດຂາດ ແມ່ນ ເປັນ ພື້ນທີ່ ເຂດອະນຸລັກຊີວະນາງພັນ ແລະ ເຂດທີ່ມີຄວາມ ສຳຄັນ ທາງດ້ານສາດສະ ໜາ ແລະ ປະເພນີ.

6.2.1.3 ການລ່າສັດ ບໍ່ຄວນອະນຸຍາດ ໃນ ພື້ນທີ່ ປ່າອະນຸລັກ ແລະ ຫ້າມລ່າສັດ ເດັດຂາດ ໃນພື້ນທີ່ ເຂດອະນຸລັກຊີວະນາງພັນ.

6.2.1.4 ແຕ່ລະບ້ານທີ່ເຂົ້າຮ່ວມ ການຈັດສັນຄຸ້ມຄອງ ເຂດຄຸ້ມຄອງຍ່ອຍ ຕ້ອງສ້າງ ລະບຽບ ຫຼັກການ ສຳລັບ ຄຸ້ມຄອງ ແລະ ນຳໃຊ້ ພື້ນທີ່ປ່າອະນຸລັກ ແລະ ພື້ນທີ່ປ່າປ້ອງກັນ, ລະບຽບຫຼັກການ ທີ່ສ້າງຂຶ້ນນີ້ ຄວນຈະນຳໄປລວມໄວ້ ເປັນເອກະສານຄັດຕິດ ໃສ່ກັບ ແຜນ ຈັດສັນ ເຂດຄຸ້ມຄອງ ຍ່ອຍ.

## 6.3 ການວາງແຜນຈັດສັນ ໃນ ເຂດທີ່ບໍ່ສາມາດຜະລິດໄມ້ເປັນສິນຄ້າ

**6.3.1 ພື້ນທີ່ປ່າຊົມໃຊ້ຂອງບ້ານ** ໃນ ເຂດຈັດສັນຍ່ອຍ ຄວນຈະປະກອບມີ ປ່າໂຄກແຕ້ງ, ຍົກເວັ້ນ ປ່າປະ ເພດ ທີ່ໄດ້ລວມໄວ້ ໃນ ພື້ນທີ່ປ່າຜະລິດຕົວຈິງ.

6.3.1.1 ການຕັດຟັນໄມ້ ໃນ ພື້ນທີ່ປ່າຊົມໃຊ້ຂອງບ້ານ ຄວນຈະຖືກຈຳກັດ ໂດຍ ອັດຕາການ ເຕີບໂຕ ບໍລິມາດໄມ້ ຂອງ ປ່າໂຄກແຕ້ງ ແລະ ປ່າ ປະເພດອື່ນໆ ທີ່ມີບໍລິມາດໄມ້ ຢ່າງໜ້ອຍ 50 ມ$^3$/ຮຕ. ພື້ນທີ່ ຈັດໃຫ້ເປັນປ່າຊົມໃຊ້ຂອງບ້ານ ຕ້ອງຈັດສັນ ການຂຸດຄົ້ນໄມ້ ສຳລັບ ແຕ່ລະປີ ໂດຍ ມີ ຮອບວຽນ ການຕັດຟັນ 15 ປີ ເທົ່າກັບ ຮອບວຽນຕັດຟັນ ໃນ ພື້ນທີ່ປ່າຜະລິດຕົວຈິງ.

6.3.1.2. ປ່າຊົມໃຊ້ຂອງບ້ານ ໃນ ເຂດຄຸ້ມຄອງຍ່ອຍ ຄວນຈະມີການຈັດແບ່ງ ລະຫວ່າງ ຜູ້ຊົມໃຊ້ ສະນັ້ນ ພື້ນທີ່ປ່າ ທີ່ຊາວບ້ານສາມາດຊົມໃຊ້ ຄວນຈະເປັນພື້ນທີ່ປ່າ ພາຍໃນ ຂອບເຂດ ແດນບ້ານຂອງເຂົາເຈົ້າ.

6.3.1.3 ແຕ່ລະບ້ານທີ່ເຂົ້າຮ່ວມ ການຈັດສັນຄຸ້ມຄອງ ເຂດຄຸ້ມຄອງຍ່ອຍ ຄວນຈະສ້າງ ລະບຽບຫຼັກການ ສຳລັບ ຄຸ້ມຄອງ ແລະ ນຳໃຊ້ ພື້ນທີ່ປ່າຊົມໃຊ້ຂອງບ້ານ, ລະບຽບຫຼັກການທີ່ ສ້າງ ຂຶ້ນນີ້ ຄວນຈະນຳໄປລວມໄວ້ ເປັນເອກະສານຄັດຕິດ ໃສ່ກັບ ແຜນຈັດສັນ ເຂດ ຄຸ້ມຄອງຍ່ອຍ.

## III. ຂັ້ນຕອນ ໃນ ການສ້າງ, ການອະນຸມັດ ແລະ ການປັບປຸງ ແຜນຈັດສັນປ່າໄມ້

3.1 ອີງໃສ່ ຂໍ້ມູນພື້ນຖານທາງດ້ານປ່າໄມ້, ຂໍ້ມູນການໝາຍຂອບເຂດແດນຂອງບ້ານ ແລະ ຂໍ້ມູນທີ່ກ່ຽວຂ້ອງອື່ນໆ ແລະ ພາຍໃຕ້ ການຊີ້ນຳ, ນຳພາ ທາງດ້ານເຕັກນິກວິຊາການ ຂອງກອງສຳຫຼວດ ແລະ ວາງແຜນ ປ່າໄມ້, ຂະແໜງປ່າໄມ້ແຂວງ ມີໜ້າທີ່ຮັບຜິດຊອບ ໃນ ການກຳນົດເຂດຄຸ້ມຄອງຍ່ອຍ ໂດຍມີການ ເຂົ້າຮ່ວມຂອງ ໜ່ວຍຄຸ້ມຄອງປ່າຜະລິດ ແລະ ອຳນາດການປົກຄອງບ້ານ. ຫຼັງຈາກນັ້ນ ໜ່ວຍຄຸ້ມຄອງ ປ່າຜະລິດ ຈະຕ້ອງແນະນຳ ອຳນາດການປົກຄອງທ້ອງຖິ່ນ ຈັດຕັ້ງ ການຈັດຕັ້ງກຸ່ມ ປ່າໄມ້ບ້ານຂຶ້ນ ໂດຍ ອີງຕາມ ສະພາບຂອງເຂດຄຸ້ມຄອງຍ່ອຍນັ້ນໆ. ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ຈະເຊັນອະນຸມັດ ເພື່ອຮັບຮອງເອົາ ການຈັດແບ່ງ ເຂດຄຸ້ມຄອງຍ່ອຍ ແລະ ແຈ້ງໃຫ້ ການຈັດຕັ້ງກຸ່ມປ່າໄມ້ບ້ານ, ການຈັດຕັ້ງປ່າໄມ້ບ້ານ ຮັບຮູ້.

3.2 ໜ່ວຍຄຸ້ມຄອງປ່າຜະລິດ ຕ້ອງໄດ້ສ້າງ ແຜນຈັດສັນປ່າໄມ້ ຂອງ ເຂດຄຸ້ມຄອງຍ່ອຍ ໂດຍ ມີ ກອງສຳຫຼວດ ແລະ ວາງແຜນປ່າໄມ້ ຊີ້ນຳ, ນຳພາ ທາງດ້ານເຕັກນິກ ວິຊາການ, ມີການປະສານສົມທົບ ຂອງ ຂະແໜງປ່າໄມ້ແຂວງ ແລະ ມີການເຂົ້າຮ່ວມຂອງ ອົງການຈັດຕັ້ງປ່າໄມ້ບ້ານ. ຫຼັງຈາກນັ້ນ ໜ່ວຍຄຸ້ມຄອງປ່າຜະລິດ ຈະຕ້ອງໄດ້ສົ່ງແຜນຈັດສັນ ດັ່ງກ່າວ ໃຫ້ ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ເພື່ອ ເຊັນອະນຸມັດ.

3.3 ຫຼັງຈາກ ແຜນຈັດສັນປ່າໄມ້ ຂອງ ເຂດຄຸ້ມຄອງຍ່ອຍ ທັງໝົດ (ພາຍໃນເຂດຄຸ້ມຄອງໜຶ່ງ) ໄດ້ຜ່ານການຮັບຮອງ ໂດຍ ຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ເມືອງ, ໜ່ວຍຄຸ້ມຄອງປ່າຜະລິດ ພາຍໃຕ້ການ ຊີ້ນຳ, ນຳພາ ທາງດ້ານເຕັກນິກວິ ຊາການ ຂອງ ກອງສຳຫຼວດ ແລະ ວາງແຜນປ່າໄມ້, ການສົມທົບ ຂອງ ຂະແໜງປ່າໄມ້ ມີໜ້າທີ່ຮັບຜິດຊອບ ການສັງລວມ ແຜນຈັດສັນເຂດຄຸ້ມຄອງຍ່ອຍ ເຂົ້າກັນເພື່ອສ້າງ ເປັນແຜນຈັດສັນເຂດຄຸ້ມຄອງ. ຫຼັງຈາກນັ້ນ ຫ້ອງການສູນສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ຕ້ອງນຳສະເໜີ ແຜນຈັດສັນປ່າໄມ້ ຂອງ ເຂດຄຸ້ມຄອງ ໃຫ້ ຂະແໜງປ່າໄມ້ ເພື່ອຂໍອະນຸມັດຈາກ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ຂະແໜງປ່າໄມ້ ເປັນຜູ້ສັງລວມ ແຜນຈັດສັນເຂດຄຸ້ມຄອງ ເຂົ້າເປັນແຜນຈັດສັນເຂດປ່າຜະລິດ.

3.4 ຫຼັງຈາກ ແຜນຈັດສັນເຂດຄຸ້ມຄອງ ທັງໝົດ (ພາຍໃນເຂດປ່າຜະລິດໜຶ່ງ) ຜ່ານການຮັບຮອງ ເບື້ອງຕົ້ນ, ຂະແໜງປ່າໄມ້ ພາຍໃຕ້ການຊີ້ນຳ, ນຳພາ ທາງດ້ານເຕັກນິກວິຊາການ ຂອງ ກອງສຳຫຼວດ ແລະ ວາງແຜນປ່າໄມ້ ຈະຕ້ອງ ສັງລວມ ແຜນຈັດສັນເຂດຄຸ້ມຄອງ ເປັນ ແຜນຈັດສັນເຂດປ່າຜະລິດ. ພະແນກ ກະສິກຳ ແລະ ປ່າໄມ້ ຈະນຳສົ່ງ ແຜນຈັດສັນປ່າໄມ້ ຂອງ ເຂດປ່າຜະລິດ ໃຫ້ກັບ ກົມປ່າໄມ້ ເພື່ອອະນຸມັດ ຂັ້ນຕອນສຸດທ້າຍ.

3.5 ກອງສຳຫຼວດ ແລະ ວາງແຜນວາງປ່າໄມ້ ຕ້ອງໄດ້ທົບທວນ-ກວດກາຄືນ ບັນດາ ແຜນຈັດສັນເຂດປ່າຜະລິດ ເພື່ອນຳສະເໜີ ກົມປ່າໄມ້ ຮັບຮອງ ຢ່າງເປັນທາງການ.

3.6 ແຜນຈັດສັນປ່າໄມ້ ຈະມີອາຍຸການນຳໃຊ້ ເທົ່າກັບ ໄລຍະເວລາຮອບວຽນຕັດປ່າ (15 ຫຼື 20 ປີ), ໝາຍຄວາມວ່າ ໃນທຸກໆ 15 ຫຼື 20 ປີ ຕ້ອງໄດ້ມີການປັບປຸງດັດແກ້ ແຜນຈັດສັນ ຢ່າງໜ້ອຍ 1 ຄັ້ງ. ໃນກໍລະນີ ມີການປ່ຽນແປງ ທາງດ້ານ ສະພາບພື້ນທີ່, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງເຮັດໃຫ້ ແຜນຈັດສັນປ່າໄມ້ ບໍ່ສອດຄ່ອງ ແລະ ເໝາະສົມກັບ ສະພາບຄວາມເປັນຈິງ ຕ້ອງມີການປັບປຸງ ແຜນຈັດສັນ ຄືນໃໝ່.

## IV. ໜ້າທີ່ຂອບເຂດສິດ ຂອງແຕ່ລະພາກສ່ວນ

ໜ້າທີ່ຂອບເຂດສິດ ໃນ ການວາງແຜນຈັດສັນປ່າຜະລິດ

4.1 ກົມປ່າໄມ້ ເປັນຜູ້ອະນຸມັດແຜນຈັດສັນເຂດປ່າຜະລິດ.

4.2 ກອງສຳຫຼວດ ແລະວາງ ແຜນປ່າໄມ້ ມີໜ້າທີ່:

- ເປັນເສນາທິການໃຫ້ກົມປ່າໄມ້ ທາງດ້ານວິຊາການ ໃນ ການກວດກາ ເນື້ອໃນແຜນຈັດສັນປ່າໄມ້ ໂດຍ ເຊີນເອົາພະແນກ, ກອງ ອ້ອມຂ້າງກົມປ່າໄມ້ ມາປະຊຸມປຶກສາຫາລື ເພື່ອຄວາມ ເປັນເອກະພາບ.
- ຊີ້ນຳ ນຳພາ ທາງດ້ານເຕັກນິກວິຊາການ ໃນ ການວາງແຜນຈັດສັນປ່າໄມ້ ໃນທຸກຂັ້ນຕອນ ພ້ອມທັງຈັດຝຶກອົບຮົມ ໃຫ້ພະນັກງານ ປ່າໄມ້ ແຂວງ, ເມືອງ ເພື່ອເສີມສ້າງຄວາມສາມາດ ທາງດ້ານ ການວາງແຜນຈັດສັນປ່າໄມ້ ໃຫ້ຖືກຕ້ອງ.

4.3 ຂະແໜງປ່າໄມ້ແຂວງ ມີໜ້າທີ່: ຮັບຜິດຊອບ ໃນການ ສ້າງແຜນຈັດສັນ ເຂດປ່າຜະລິດ ທີ່ ນອນຢູ່ພາຍໃນ ແຂວງຂອງຕົນ ແລະ ນຳສະເໜີ ຕໍ່ ກົມປ່າໄມ້ ເພື່ອຂໍອະນຸມັດ ຕາມຂັ້ນຕອນ.

4.4 ໜ່ວຍຄຸ້ມຄອງປ່າຜະລິດ ມີໜ້າທີ່:

- ເປັນເຈົ້າການ ໃນການສ້າງແຜນຈັດສັນປ່າໄມ້ ພາຍໃນເຂດຄຸ້ມຄອງ ທີ່ນອນຢູ່ໃນເມືອງຂອງຕົນ.
- ເຂົ້າຮ່ວມ ສ້າງລະບຽບຫຼັກການ ກ່ຽວກັບ ສິດນຳໃຊ້ ຊັບພະຍາກອນປ່າໄມ້ ຕາມຮີດຄອງປະເພນີຂອງ ບັນດາບ້ານທີ່ນອນຢູ່ ໃນເມືອງຂອງຕົນ.

4.5 ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ເປັນເຈົ້າການ ໃນການສ້າງແຜນຈັດສັນປ່າໄມ້ພາຍໃນເຂດຄຸ້ມຄອງ ທີ່ນອນຢູ່ໃນເມືອງຂອງຕົນ.

4.6 ການຈັດ ຕັ້ງປ່າໄມ້ບ້ານ ແລະ ອຳນາດການປົກຄອງບ້ານ ມີໜ້າທີ່: ສ້າງ ລະບຽບຫຼັກການ ກ່ຽວກັບສິດ ນຳໃຊ້ຊັບພະຍາກອນປ່າໄມ້ ຕາມຮີດຄອງປະເພນີ ທີ່ນອນຢູ່ໃນ ເຂດແດນບ້ານຂອງຕົນ ແລະສົ່ງ ລະບຽບຫຼັກການ ດັ່ງກ່າວ ເພື່ອລວບລວມເຂົ້າໄວ້ ໃນແຜນຈັດສັນ ເຂດຄຸ້ມຄອງຍ່ອຍ.

## V. ການຈັດຝຶກອົບຮົມ ແລະ ການສ້າງຄວາມອາດສາມາດ

5.1 ກອງສຳຫຼວດ ແລະ ວາງແຜນປ່າໄມ້ ຕ້ອງໄດ້ຝຶກອົບຮົມ ໃຫ້ ພະນັກງານຂະແໜງປ່າ ໄມ້ ແຂວງ ແລະ ພະນັກງານ ໜ່ວຍຄຸ້ມຄອງປ່າຜະລິດ ຜູ້ທີ່ຈະເຂົ້າຮ່ວມ ການສ້າງແຜນຈັດສັນ ປ່າຜະລິດ.

5.2 ໜ່ວຍຄຸ້ມຄອງປ່າຜະລິດ ຕ້ອງໄດ້ ຝຶກອົບຮົມ ໃຫ້ ການຈັດຕັ້ງປ່າໄມ້ບ້ານ ສ້າງລະບຽບການ ກ່ຽວກັບ ສິດນຳໃຊ້ຊັບພະຍາກອນປ່າໄມ້ ຕາມຮີດຄອງປະເພນີ.

## VI. ການແຈກຢາຍ ແລະ ເກັບຮັກສາ ແຜນຈັດສັນປ່າຜະລິດ

6.1 ແຜນຈັດສັນເຂດປ່າຜະລິດ ທີ່ໄດ້ຮັບອະນຸມັດ ຈາກ ກົມປ່າໄມ້ ຕ້ອງໄດ້ສຳເນົາ ແລະ ເກັບຮັກສາ ໄວ້ ຢູ່ ກອງສຳຫຼວດ ແລະ ວາງແຜນປ່າໄມ້, ຂະແໜງປ່າໄມ້ ແລະ ໜ່ວຍຄຸ້ມຄອງປ່າຜະລິດ ຂອງ ແຕ່ລະ ເມືອງທີ່ ກ່ຽວຂ້ອງ

6.2 ແຜນຈັດສັນເຂດຄຸ້ມຄອງ ທີ່ເຊັນຮັບຮອງ ຈາກ ກົມປ່າໄມ້ ຕ້ອງໄດ້ສຳເນົາ ແລະ ເກັບຮັກສາໄວ້ຢູ່ ຂະແໜງປ່າໄມ້ ແລະ ໜ່ວຍຄຸ້ມຄອງປ່າຜະລິດ ຂອງ ແຕ່ລະເມືອງທີ່ກ່ຽວຂ້ອງ

6.3 ແຜນຈັດສັນເຂດຄຸ້ມຄອງຍ່ອຍ ຜ່ານການຮັບຮອງ ຈາກ ກົມປ່າໄມ້ ຕ້ອງໄດ້ສຳເນົາ ແລະ ເກັບຮັກສາໄວ້ທີ່ ໜ່ວຍຄຸ້ມຄອງປ່າຜະລິດ ແລະ ການຈັດຕັ້ງປ່າໄມ້ ບ້ານທີ່ກ່ຽວຂ້ອງທຸກໆບ້ານ.

ຫົວໜ້າກົມປ່າໄມ້